ພຣະຄຳພີສຳລັບຫຼານນ້ອຍ

ສະເໜີ

ພຣະກຳເນີດ ຂອງພຣະເຢຊູ

ຂຽນໂດຍ: Edward Hughes
ແຕ້ມຮູບໂດຍ: M. Maillot; Alastair Paterson
ດັດແກ້ໂດຍ: E. Frischbutter; Sarah S.
ແປໂດຍ: Christian Lingua

ຈັດພິມໂດຍ: Bible for Children
www.M1914.org

BFC
PO Box 3
Winnipeg, MB R3C 2G1
Canada

©2022 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ດົນນານມາແລ້ວ,
ພຣະເຈົ້າໄດ້ສົ່ງທູດສະຫວັນຄັບບຣິເອນໄປຫາ
ຍິງສາວພົມມະຈົນຊາວຢິວຄົນໜຶ່ງຊື່
ນາງ ມາຣີ. ພຣະອົງໄດ້ຊົງກ່າວແກ່ນາງວ່າ,
"ເຈົ້າຈະໃຫ້ກຳເນີດບຸດຊາຍ
ແລະຈົ່ງເອີ້ນນາມຊື່ເພີ່ນວ່າ ເຢຊູ.
ເພີ່ນຈະຖືກເອີ້ນວ່າເປັນພຣະບຸດຂອງພຣະ
ເຈົ້າອົງສູງສຸດ.
ພຣະອົງຈະຊົງຄອງຣາດຕະຫຼອດໄປເປັນນິດ."

ມາຣີກໍປະຫຼາດໃຈຫຼາຍ ແລະກ່າວວ່າ,
"ເຫດການນີ້ຈະເກີດຂຶ້ນໄດ້ແນວໃດ
ເພາະຂ້ານ້ອຍຍັງບໍ່ໄດ້ຫຼັບນອນນຳຊາຍໃດເລີຍ."
ທູດສະຫວັນຊົງກ່າວແກ່ນາງວ່າ
ບຸດນັ້ນຈະເປັນມາແຕ່ພຣະເຈົ້າ
ຊຶ່ງຈຳເປັນຕ້ອງມີພໍ່ທີ່ເປັນ
ມະນຸດ.
3

ຫຼັງຈາກນັ້ນ ທູດສະຫວັນກໍໄດ້ໄປຫາພີ່ນ້ອງຂອງນາງ ມາຣີ
ຄືນາງ ເອລິຊາເບັດ ເພື່ອບອກວ່ານາງກໍກຳລັງຈະໃຫ້ກຳເນີດ
ບຸດຊາຍຄືກັນ ເຖິງແມ່ນວ່ານາງຈະ
ອາຍຸຫຼາຍແລ້ວກໍຕາມ.
ອັນນີ້ກໍເປັນເຫດການອັດສະ
ຈັນດ້ວຍ. ຫຼັງຈາກນັ້ນບໍ່ດົນ,
ມາຣີຈຶງໄດ້ໄປຢ້ຽມນາງ
ເອລິຊາເບດ.
ພວກເຂົາເຈົ້າກໍພາກັນ
ສັນລະເສີນພຣະເຈົ້າ.
4


ນາງ ມາຣີ ໄດ້ຕົກລົງໝັ້ນໝາຍທີ່ຈະແຕ່ງງານກັບຊາຍຄົນໜຶ່ງທີ່ຊື່
ໂຢເຊບ. ຝ່ າຍໂຢເຊບກໍເສຍ
ໃຈຫຼາຍພາຍຫຼັງທີ່ຮູ້ວ່າ ນາງ
ມາຣີ ໄດ້ຖືພາ.
ລາວຄິດວ່າຄົງແມ່ນຊາຍອື່ນ
ທີ່ເປັນພໍ່ຂອງເດັກ.
5

ທູດສະຫວັນຂອງພຣະເຈົ້າໄດ້ເຂົ້າຝັນໂຢເຊບ
ເພື່ອບອກລາວວ່າເດັກທີ່ຈະເກີດມານັ້ນແມ່ນພຣະບຸດຂອງພຣະເຈົ້າ
ແລະໄດ້ບອກໃຫ້ໂຢເຊບຊ່ວຍນາງ ມາຣີ
ລ້ຽງດູພຣະກຸມມານດ້ວຍ.
6

ໂຢເຊບໄວ້ວາງใจ ແລະເຊື່ອຟັງພຣະເຈົ້າ. ນອກນັ້ນ ຍັງເປັນການປະຕິບັດ
ຕາມກົດໝາຍຂອງບ້ານເມືອງດ້ວຍ, ...
7

... ເພາະຕອນນັ້ນມີກົດໝາຍສະບັບໃໝ່ອອກມາ ເຮັດໃຫ້ໂຢເຊບ
ແລະນາງ ມາຣີ ຕ້ອງໄດ້ເດີນທາງໄປຈ່າຍພາສີທີ່ບ້ານເກີດເມືອງນອນຂອງ
ຕົນຄື ເບດເລເຮມ.
8

ນາງ ມາຣີ ແມ່ນຢູ່ໃນຊ່ວງຂອງ
ເດືອນຄອງແລ້ວ ຄືໃກ້ຈະຮອດ
ກຳນົດໃຫ້ກຳເນີດແກ່ພຣະ
ກຸມມານແລ້ວ. ແຕ່ໂຢເຊບບໍ່
ສາມາດຫາຫ້ອງພັກໄດ້.
ໂຮງແຮມທຸກ
ຫ້ອງເຕັມໝົດ.
9

ໃນທີ່ສຸດ ໂຢເຊບກໍພົບຄອກມ້າແຫ່ງໜຶ່ງ. ພຣະກຸມມານໄດ້ເກີດໃນທີ່ນັ້ນ.
ມານດາຂອງພຣະອົງໄດ້ພັນພຣະອົງໄວ້ເທິງຮາງຫຍ້າ, ບ່ອນທີ່ພວກເຂົາໃຊ້
ເປັນບ່ອນໃຫ້ອາຫານແກ່ໂຕສັດ.
10

ໃກ້ໆນັ້ນ ມີພວກລ້ຽງແກະພວມນອນເຝົ້າຝູງແກະຂອງຕົນຢູ່.
ທູດສະຫວັນຂອງພຣະເຈົ້າໄດ້ປະກົດ
ແລະບອກພວກເຂົາຂ່າວອັນປະເສີດນີ້.
11

"ວັນນີ້ ພຣະຜູ້ຊົ່ວໂມງໃຫ້ພົ້ນອົງໜຶ່ງຄືພຣະຄຣິດເຈົ້າ
ໄດ້ມາບັງເກີດໃນເມືອງດາວິດສຳລັບເຈົ້າທັງຫຼາຍ.
ພວກເຈົ້າຈະພົບພຣະກຸມມານນອນໃນຮາງຫຍ້າ."
12

ໃນທັນໃດນັ້ນ ກໍມີທູດສະຫວັນຫຼາຍອົງມາປາກົດ,
ກ່າວຮ້ອງສັນລະເສີນພຣະເຈົ້າວ່າ, ...
13

... "ພຣະລັດສະໝີຈົ່ງມີແກ່ພຣະເຈົ້າໃນທີ່ສູງສຸດ
ແລະທີ່ແຜ່ນດິນໂລກຈົ່ງມີສັນຕິສຸກ
ແກ່ມະນຸດທັງປວງທີ່ພຣະອົງຊົ່ງຊອບພຣະໄທນັ້ນ."
14

ພວກຜູ້ລ້ຽງແກະກໍຟ້າວພາກັນແລ່ນໄປທີ່ຄອກມ້າ.
ຫຼັງຈາກໄດ້ພົບກັບພຣະກຸມມານແລ້ວ
ພວກເຂົາກໍແລ່ນໄປບອກທຸກຄົນທີ່ຕົນເອງພົບເຫັນ
ກ່ຽວກັບສິ່ງທີ່ທູດສະຫວັນໄດ້ກ່າວເຖິງເລື່ອງພຣະເຢຊູ.
15

ອີກສີ່ສິບວັນຕໍ່ມາ, ໂຢເຊບ ແລະມາຣີ ກໍໄດ້
ພາພຣະກຸມມານເຢຊູໄປຍັງພຣະວິຫານໃນກຸງ
ເຢຣູຊາເລັມ. ໃນທີ່ນັ້ນ
ມີຊາຍຄົນໜຶ່ງຊື່ ຊີໂມນ
ແລະອີກຜູ້ໜຶ່ງຊື່ ນາງ ອານາ
ຊຶ່ງເປັນຜູ້ຮັບໃຊ້ອົງພຣະຜູ້ເປັ
ນເຈົ້າ, ກໍໄດ້ກ່າວສັນລະເສີນພ
ຣະເຈົ້າເມື່ອພວກຕົນໄດ້
ເຫັນພຣະກຸມມານ,
16

ທັງສອງຄົນຮູ້ຈັກວ່າ ພຣະເຢຊູຊົ່ງເປັນພຣະບຸດ
ຂອງພຣະເຈົ້າ,
ພຣະຜູ້ຊົ່ງໂຜດໃຫ້ພົ້ນທີ່
ສັນຍາວ່າຈະສະເດັດມານັ້ນ.
ໂຢເຊບໄດ້ຖວາຍນົກສອງໂຕ.
ອັນນີ້ແມ່ນເພື່ນເຮັດ
ຕາມພຣະບັນຍັດຂອງພຣະເຈົ້າ
ທີ່ລະບຸໄວ້ສຳລັບຄົນທຸກຍາກ
ເມື່ອເຂົາເຈົ້າເອົາລູກນ້ອຍ
ມາຖວາຍແກ່ພຣະເຈົ້າ
ພວກເຂົາຕ້ອງນຳເອົາ
ນົກສອງໂຕມານຳ.
17

ຕໍ່ມາ,
ກໍມີດາວພິເສດນຳໂຫລາ
ຈານຈາກພາກຕາເວັນ
ອອກຂອງປະເທດມາຍັງ
ກຸງເຢຣູຊາເລັມ.
ພວກເຂົາຖາມປະຊາຊົນມາເລື້ອຍວ່າ,
"ພຣະອົງຜູ້ທີ່ບັງເກີດມາເປັນກະສັດ
ຂອງຊາດຢິວນັ້ນ ຢູ່ທີ່ໃດ?
ພວກເຮົາປະສົງທີ່ຈະຂາບໄຫວ້ເພື່ນ."
18


ກະສັດເຮໂຣດໄດ້ຍິນເລື່ອງພວກໂຫ
ລາຈານ. ບັນຫາກໍບັງເກີດ,
ເມື່ອພຣະອົງບອກພວກໂຫລາຈານ
ວ່າໃຫ້ບອກຕົນທັນທີທີ່ພົບພຣະ
ກຸມມານນັ້ນ. ເຮໂຣດກ່າວວ່າ,
"ເຮົາກໍຢາກໄປຂາບໄຫວ້ເພື່ນ
ຄືກັນກັນ." ແຕ່ເຮໂຣດເວົ້າຕົວະ.
ເຮໂຣດຕ້ອງການຂ້າພຣະອົງເຢຊູ
ຖິ້ມເສຍ.
19

ດວງດາວນັ້ນໄດ້ນຳໂຫລາຈານໄປຍັງບ່ອນທີ່ມາຣີ ແລະໂຢເຊບ
ພັກອາໃສຢູ່ກັບພຣະກຸມມານ.
ພວກເຂົາກໍພາກັນກົ້ມຂາບ
ແລະຖວາຍຂອງຂວັນອັນລ້ຳຄ່າເຊັ່ນ
ເງິນຄຳ
ແລະນ້ຳຫອມ ແກ່ພຣະກຸມມານເຢຊູ.
20

ພຣະເຈົ້າໄດ້ເຂົ້າຝັນເຕືອນພວກໂຫລາ
ຈານໃຫ້ກັບໄປທາງອື່ນເສຍ. ຝ່າຍ
ເຮໂຣດໃຈຮ້າຍຫຼາຍ. ດ້ວຍຄວາມມຸ່ງ
ໝັ້ນທີ່ຈະຂ້າພຣະເຢຊູໃຫ້ໄດ້, ຜູ້ປົກຄອງ
ທີ່ຊົ່ວຮ້າຍນີ້ໄດ້ສັ່ງຂ້າເດັກນ້ອຍຜູ້ຊາຍ
ທຸກຄົນໃນເມືອງເບດເລເຮັມ.

ແຕ່ເຮໂຣດບໍ່ສາມາດເຮັດຮ້າຍອັນໃດ
ແກ່ພຣະບຸດຂອງພຣະເຈົ້າໄດ້! ໂຢເຊບ
ໄດ້ຮັບຄຳເຕືອນທາງຄວາມຝັນ, ເພີ່ນ
ຈຶງລຸກຂຶນພາມາຣີ ແລະໂຢເຊບອອກ
ເດີນທາງໄປຍັງປະເທດເອຢິບ.

ເມື່ອເຮໂຣດສິ້ນພຣະຊົນແລ້ວ
ໂຢເຊບກໍໄດ້ພາມາຣີ
ແລະພຣະກຸມມານເຢຊູກັບໄປຍັງປະເທດເອຢິບ.
ພວກເຂົາອາໃສຢູ່ໃນເມືອງນ້ອຍໆທີ່ມີຊື່ວ່າ
ນາຊາເຮັດ, ໃກ້ກັບທະເລຄາລິເລ.

ພຣະກຳເນີດຂອງພຣະເຢຊູ

ເລື່ອງຶໝງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ມັດທາຍ ບົດທີ 1-2, ລູກາ ບົດທີ 1-2

“ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ.”
ເພງສັນລະເສີນ 119:130

ເລື່ອງລາວໃນພຣະຄຳພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ
ຈົນໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງຫຼານທັນທີ,
ແລະຫຼານຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນຶໝງຂ້ານ້ອຍຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ອຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄຳພີ ແລະສົນທະນານຳພຣະເຈົ້າທຸກວັນ! ໂຢຮັນ 3:16